ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ເລກທີ 281 / ກພປຊ

ນະຄອນຫຼວງ ວຽງຈັນ, ວັນທີ 26 APR 2010

# ຂໍ້ຕົກລົງ

## ວ່າດ້ວຍ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ (ກພປຊ) ຂັ້ນທ້ອງຖິ່ນ.

- ອີງຕາມດຳລັດ ສະບັບ ເລກທີ 38/ ນຍ, ລົງວັນທີ 21 ກຸມພາ 2005 ວ່າດ້ວຍ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
- ອີງຕາມ ກົດລະບຽບ ຂອງກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເລກທີ 011/ ກພປຊ, ລົງວັນທີ 12 ຕຸລາ 2009.
- ອີງຕາມ ແຈ້ງການ ຂອງສະພາບໍລິຫານ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເລກທີ 057/ ກພປຊ, ລົງວັນທີ 01 ກຸມພາ 2010 ໃຫ້ແຕ່ງຕັ້ງ ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ.
- ອີງຕາມ ການຄົ້ນຄວ້າ ປະກອບຄຳເຫັນ ແລະ ຕົກລົງເປັນເອກະພາບ ຂອງສະພາບໍລິຫານ ກອງທຶນ ກພປຊ ຄັ້ງວັນທີ 15 ມີນາ 2010

ປະທານ ສະພາບໍລິຫານ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຕົກລົງ :

### ໝວດທີ I
### ຈຸດປະສົງ ແລະ ທີ່ຕັ້ງ

**ມາດຕາ 1** ຈຸດປະສົງ

ຂໍ້ຕົກລົງ ສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ , ໂຄງປະກອບການຈັດຕັ້ງ , ແບບແຜນວິທີເຮັດວຽກ, ການຄຸ້ມຄອງນຳໃຊ້ງົບປະມານກອງທຶນ ກພປຊ ແລະ ການຊຸກຍູ້ລະດົມທຶນ ຂອງ ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂັ້ນທ້ອງຖິ່ນ.

**ມາດຕາ 2** ທີ່ຕັ້ງ ຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

ຄະນະກຳມະການກອງທຶນ ກພປຊ ຂັ້ນທ້ອງຖິ່ນ ບໍ່ໄດ້ປະຈຳການຢູ່ໃນພະແນກກະສິກຳ ແລະ ປ່າໄມ້ ຫຼື ພະແນກການໃດນຶ່ງ,ໂດຍໄດ້ຮັບການແຕ່ງຕັ້ງ ຈາກເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ຊຶ່ງປະກອບດ້ວຍ ສະມາຊິກທີ່ຕາງໜ້າຈາກພາກສ່ວນກ່ຽວຂ້ອງຄື :ພະແນກ ກະສິກຳ ແລະ ປ່າໄມ້ ພະແນກ ການເງິນ, ພະແນກ ອຸດສາຫະກຳ ແລະ ການຄ້າ ພະແນກ ພະລັງງານ ແລະ ບໍ່ແຮ່ ແລະ

ພະແນກ ທ່ອງທ່ຽວປະຈຳ ແຂວງ ແລະ ນະຄອນຫຼວງເຂົ້າຮ່ວມ.

## ໝວດທີ II

## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

**ມາດຕາ 3.** ພາລະບົດບາດ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ.

ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂັ້ນທ້ອງຖິ່ນ ແມ່ນກົງຈັກຊ່ວຍວຽກ ຂອງສະພາບໍລິຫານ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ມີພາລະບົດບາດ : ແນະນຳ ແລະ ຕິດຕາມ ບັນດາໜ່ວຍງານ, ກອງ ແລະ ຂະແໜງ ໃນການສ້າງບົດສະເໜີໂຄງການ, ແຜນການນຳໃຊ້ ງົບປະມານ, ການຈັດຕັ້ງປະຕິບັດວຽກງານ ຂອງບັນດາໂຄງການ ຕາມກິດຈະກຳຕ່າງໆ ແລະ ການສະຫຼຸບ ສັງລວມລາຍງານ ການນຳໃຊ້ ງົບປະມານຕາມແຜນແບ່ງປັນຂອງ ກອງທຶນ ກພປຊ ສູນກາງ .

- ປຸກລະດົມທຶນ ແລະ ເກັບລາຍຮັບຈາກແຫຼ່ງຕ່າງໆເຂົ້າກອງທຶນ ກພປຊ ໃຫ້ສອດຄ່ອງກັບດຳລັດ 38/ນຍ, ມາດຕາ12 ແລະ ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານ ການເກັບລາຍຮັບເຂົ້າກອງທຶນ ກພປຊ

**ມາດຕາ 4** ຂອບເຂດສິດ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

4.1 ກວດກາບົດສະເໜີໂຄງການ ແລະ ແຜນນຳໃຊ້ງົບປະມານ ກອງທຶນ ຂອງບັນດາຂະແໜງການ ກອງ ແລະ ໜ່ວຍງານຕ່າງໆ ທີ່ຂໍອະນຸມັດນຳໃຊ້ງົບປະມານ ກອງທຶນ ປະຈຳສົກປີ ແລະ ງວດ ເພື່ອນຳສະເໜີ ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ພິຈາລະນາ ກ່ອນນຳສະເໜີຫາ ກອງທຶນ ກພປຊ ສູນກາງ , ຕິດຕາມການນຳໃຊ້ ງົບປະມານ ຫຼັງຈາກ ກອງທຶນ ກພປຊ ໄດ້ໂອນງົບປະມານ ປະຈຳງວດໃຫ້ ເພື່ອນຳໃຊ້ເຂົ້າວຽກງານຕົວຈິງ ຂອງບັນດາຂະແໜງການ, ກອງ ແລະ ໜ່ວຍງານ ຕ່າງໆໃຫ້ໄປຕາມເປົ້າໝາຍ ແລະ ຖືກຕາມລະບຽບການ.

4.2 ສະເໜີກົນໄກໃນການຄຸ້ມຄອງເກັບລາຍຮັບສ້າງເປັນແຜນລາຍຮັບປະຈຳສົກປີ, ລະດົມຊຸກຍູ້ການເກັບລາຍຮັບ ໃຫ້ສອດຄ່ອງ ແລະ ຄົບຖ້ວນຕາມດຳລັດ, ລະບຽບການ ແລະ ນິຕິກຳຕ່າງໆ ກ່ຽວກັບການເກັບລາຍຮັບເຂົ້າ ກອງທຶນ ກພປຊ

4.3 ຕິດຕາມ ແລະ ປະເມີນຜົນ , ຢັ້ງຢືນຜົນການຈັດຕັ້ງປະຕິບັດ ການຄຸ້ມຄອງນຳໃຊ້ ງົບປະມານ ກອງທຶນ ແລະ ການສະຫຼຸບລາຍງານ ການເຄື່ອນໄຫວວຽກງານຂອງບັນດາຂະແໜງການ, ກອງ ແລະ ໜ່ວຍງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ສົກປີ ຕາມກິດຈະກຳຕ່າງໆ ໃຫ້ສອດຄ່ອງກັບລະບຽບຂອງ ກອງທຶນ ກພປຊ.

**ມາດຕາ 5** ໜ້າທີ່ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

5.1 ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງມາຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ມີໜ້າທີ່ ສົມທົບກັບພະແນກການ ກ່ຽວຂ້ອງ ສ້າງແຜນລາຍຮັບປະຈຳສົກປີ, ແນະນຳ, ຂະແໜງການ ກອງ, ໜ່ວຍງານຕ່າງໆໃນການຂຽນບົດ ສະເໜີໂຄງ ການ, ສ້າງແຜນງົບປະມານປະຈຳປີ, ປະຈຳງວດ ເພື່ອຂໍອະນຸມັດນຳໃຊ້ງົບປະມານ, ຕິດຕາມການຄຸ້ມຄອງນຳໃຊ້ ແລະ ການສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານໃຫ້ໄປຕາມແຜນ ແລະ ກິດຈະກຳທີ່ ກອງທຶນ

ກພປຊ ສູນກາງແບ່ງງົບປະມານໃຫ້ ແລະ ໃຫ້ຖືກຕ້ອງຕາມລະບຽບການ ຄື :

- ບົດສະເໜີໂຄງການຕ້ອງໄປຕາມແບບຟອມທີ່ກະຊວງ ແຜນການ ແລະ ລົງທຶນ ວາງອອກ,
- ແຜນການລະອຽດເພື່ອຂໍອະນຸມັດງົບປະມານຈາກ ກອງທຶນ ກພປຊ ແລະ ການສະຫຼຸບລາຍງານຕ້ອງໃຫ້ສອດຄ່ອງກັບ ຂໍ້ຕົກລົງ ຂອງລັດ ຖະມົນຕີ ກະຊວງການເງິນ ວ່າດ້ວຍ ກໍານົດໝາຍການໃຊ້ຈ່າຍງົບ ປະມານ ບໍລິຫານ ຂອງລັດ(ສະບັບປັບປຸງໃໝ່) ເລກທີ່ 0008/ກງ, ລົງວັນທີ່ 05 ມັງກອນ 2010 ແລະ ລະບຽບການຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍການປະມູູ, ລົງວັນທີ່ 12 ມີນາ 2004

5.2 ພະນັກງານທີ່ໄດ້ຮັບການແຕ່ງຕັ້ງມາຈາກພະແນກ ການເງິນປະຈໍາແຂວງ ແລະ ນະຄອນຫຼວງມີໜ້າທີ່ສົມທົບກັບພະແນກ ກະສິກໍາ ແລະ ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງຊອກແຫຼ່ງລາຍຮັບ, ຊຸກຍູ້ການສ້າງລາຍຮັບເຂົ້າ ກອງທຶນ ປະຕິບັດລັດຖະບັນຍັດປະທານປະເທດ ເລກທີ່ 03/ປປທ, ລົງວັນທີ່ 19 ພະຈິກ 2008 ແລະ ຈາກແຫຼ່ງຕ່າງໆ ທີ່ໄດ້ລະບຸໄວ້ໃນ ມາດຕາ 12 ຂອງ ດໍາລັດ ເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005 ວ່າດ້ວຍກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ບົດແນະນໍາເລກທີ 0092/ກງ, ລົງວັນທີ 13 ມັງກອນ 2009. ລະບຽບການຄຸ້ມຄອງ ແລະ ນໍາໃຊ້ງົບປະມານ ຂອງກອງທຶນ ກພປຊ ເລກທີ່ 001/ ກພປຊ, ລົງວັທີ 27 ກຸມພາ 2008 ແລະ ບັນດານິຕິກໍາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານເກັບລາຍຮັບ ເຂົ້າກອງທຶນ ກພປຊ ,

- ຊຸກຍູ້ເກັບລາຍຮັບ ແລະ ລະດົມທຶນຈາກແຫຼ່ງຕ່າງໆ ເຂົ້າກອງທຶນ ກພປຊ

5.3 ພະນັກງານທີ່ໄດ້ຮັບການແຕ່ງຕັ້ງມາຈາກພະແນກອຸດສາຫະກໍາ ແລະ ການຄ້າປະຈໍາແຂວງ ແລະ ນະຄອນຫຼວງ ມີໜ້າທີ່ສົມທົບກັບຂະແໜງການ ກະສິກໍາ ແລະ ປ່າໄມ້ ແລະ ຂະແໜງການເງິນ ເພື່ອໄລ່ລຽງຈໍານວນ, ລາຄາສິນຄ້າ ແລະ ສັນຍາການຊື້ຂາຍໄມ້ ແລະ ເຄື່ອງປ່າຂອງດົງເພື່ອມອບໃຫ້ຂະແໜງການ ການເງິນເປັນຜູ້ເກັບ ໂດຍໃຫ້ແຍກລາຍຮັບແຕ່ລະແຫຼ່ງໃຫ້ລະອຽດແລ້ວ ໂອນງົບປະມານເຂົ້າບັນຊີ ກອງທຶນ ກພປຊ ສູນກາງ.

5.4 ພະນັກງານທີ່ໄດ້ຮັບການແຕ່ງຕັ້ງມາຈາກ ພະແນກພະລັງງານບໍ່ແຮ່ ປະຈໍາແຂວງ ແລະ ນະຄອນຫຼວງມີໜ້າທີ່ປະສານກັບຂະແໜງການກ່ຽວຂ້ອງ ລະດົມແຫຼ່ງທຶນເຂົ້າກອງທຶນ ຈາກການສໍາປະທານຂຸດຄົ້ນບໍ່ແຮ່, ການຂາຍແຮ່ທາດ ເພື່ອມາບູລະນະປ່າໄມ້, ຟື້ນຟູປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຈາກການຂຸດຄົ້ນບໍ່ແຮ່ ແລະ ຈາກການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກ, ການຂາຍກະແສໄຟຟ້າ ເພື່ອບູລະນະ ຟື້ນຟູປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃນເຂດສ້າງເຂື່ອນ ແລະ ເຂດນໍ້າຖ້ວມ.

5.5 ພະນັກງານທີ່ໄດ້ຮັບການແຕ່ງຕັ້ງມາຈາກ ພະແນກທ່ອງທ່ຽວປະຈໍາແຂວງ ແລະ ນະຄອນຫຼວງ ມີໜ້າທີ່ປະສານກັບຂະແໜງການກ່ຽວຂ້ອງລະດົມແຫຼ່ງທຶນເຂົ້າກອງທຶນ ຈາກການເກັບຄ່າທ່ອງທ່ຽວຊົມທິວທັດທໍາມະຊາດປ່າໄມ້ ແລະ ຊັບພະຍາກອນທໍາມະຊາດ .

5.6 ຄະນະກໍາມະການກອງທຶນ ກພປຊ ຂັ້ນທ້ອງຖິ່ນມີໜ້າທີ່ສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານ ປະຈໍາ ເດືອນ, ງວດ ແລະ ສົກປີໃຫ້ ພະແນກ ການ ທີ່ຕົນສັງກັດ , ກອງທຶນ ກພປຊ ສູນກາງ ແລະ ລາຍງານເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງໄດ້ຮັບຊາບນໍາ.

ມາດຕາ 6. ຄະນະກໍາມະການ ກອງທຶນ ກພປຊ ມີໜ້າທີ່ ຕິດຕາມການສ້າງບົດສະເໜີໂຄງການ, ການຂື້ນແຜນງົບປະມານນໍາໃຊ້ ງົບປະມານ, ການນໍາໃຊ້ງົບປະມານ ແລະ ການສະຫຼຸບລາຍງານໃຫ້ສອດ

ຄ່ອງກັບ ລະບຽບການ ຂອງ ກອງທຶນ ແລະ ລະບຽບນຳໃຊ້ງົບປະມານຂອງລັດ ກະຊວງ ການເງິນ ວາງອອກ ແລະ ຊຸກຍູ້ເກັບລາຍຮັບເຂົ້າ ກອງທຶນ ກພປຊ ໃຫ້ຖືກຕາມເປົ້າໝາຍທີ່ກຳນົດໄວ້.

- ຕີລາຄາຜົນໄດ້ຮັບດ້ານດີ ແລະ ຂໍ້ບົກພ່ອງໃນການນຳໃຊ້ງົບປະມານ ເຂົ້າແຕ່ລະກິດຈະກຳ.

## ໝວດ ທີ III

## ໂຄງປະກອບ ການຈັດຕັ້ງ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

ມາດຕາ 7. ໂຄງປະກອບການຈັດຕັ້ງ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ:

7.1 ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະກອບມີພະນັກງານຈາກ ພາກສ່ວນກ່ຽວຂ້ອງດັ່ງນີ້:

- ພະແນກກະສິກຳ ແລະ ປ່າໄມ້ , ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ( ພ້ອມດ້ວຍ ພະນັກງານ ຂະແໜງປ່າໄມ້ ແລະ ແຜນການ ການເງິນ ຂອງ ພະແນກ ກະສິກຳ ແລະ ປ່າໄມ້)
- ພະແນກການເງິນ ປະຈຳແຂວງ, ຄະນະພະແນກ ການເງິນປະຈຳແຂວງ ( ຈາກ ຫ້ອງ ການຄຸ້ມຄອງຊັບສິນຂອງລັດ, ຫ້ອງການງົບປະມານ ແລະ ຄັງເງິນແຫ່ງຊາດປະຈຳແຂວງ )
- ພະແນກອຸດສາຫະກຳ ແລະ ການຄ້າ , ຄະນະພະແນກ ອຸດສາຫະກຳ ແລະ ການຄ້າ ( ຈາກຂະແໜງ ອຸດສາຫະກຳ ແລະ ການຄ້າ )
- ພະແນກ ພະລັງງານ ແລະ ບໍ່ແຮ່ , ຄະນະພະແນກ ລັງງານ ແລະ ບໍ່ແຮ່
- ພະແນກທ່ອງທ່ຽວປະຈຳແຂວງ , ຄະນະພະແນກ ທ່ອງທ່ຽວ

7.2. ການແຕ່ງຕັ້ງ ຫົວໜ້າ ຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ ປະກອບມີ :

- ຫົວໜ້າ ຄະນະກຳມະການ - ຈາກ ພະແນກ ກະສິກຳ ແລະ ປ່າໄມ້
- ຮອງ ຄະນະກຳມະການ - ຈາກ ພະແນກການເງິນປະຈຳ ແຂວງ ແລະ ນະຄອນຫຼວງ
- ຄະນະກຳມະການ - ຈາກພະແນກການກ່ຽວຂ້ອງ

7.3 ຖ້າຫາກພະນັກງານ ໃນຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ ມີການສັບປ່ຽນ ຫຼື ຍົກຍ້າຍໄປຮັບໜ້າທີ່ໃໝ່ ຕ້ອງໄດ້ແຕ່ງຕັ້ງຜູ້ໃໝ່ມາຮັບຜິດຊອບແທນ.

7.4 ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂັ້ນທ້ອງຖິ່ນ ບໍ່ມີເງິນເດືອນ ຈາກຕຳແໜ່ງ ແຕ່ຈະມີບັ້ວງເງິນຮັບໃຊ້ວຽກງານ ບໍລິຫານວຽກງານ ຕາມຫ້ອງການ ກອງທຶນ ກພປຊ ສູນກາງ ແບ່ງມາໃຫ້ຕາມແຜນກິດຈະກຳສະເໜີນຳໃຊ້ ແລະ ຫຼັງຈາກຈັດຕັ້ງປະຕິບັດສຳເລັດແລ້ວ ຕ້ອງສະຫຼຸບລາຍງານ ໃຫ້ຫ້ອງການ ກອງທຶນ ກພປຊ ໃນແຕ່ລະງວດ.

## ໝວດທີ IV

## ວ່າດ້ວຍ ລະບອບແບບແຜນວິທີເຮັດວຽກ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

8 ລະບອບແບບແຜນວິທີເຮັດວຽກ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ ແມ່ນປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວຕາມລະບົບແບ່ງຂັ້ນຄຸ້ມຄອງບົນພື້ນຖານມີການແບ່ງງານກັນຢ່າງລະອຽດຈະແຈ້ງໃນໝູ່ຄະນະ.

8.1 ຂະແໜງ ກະສິກຳ ແລະ ປ່າໄມ້ ຮັບຜິດຊອບ : ແນະນຳ, ຕິດຕາມການສະເໜີນຳໃຊ້,

8.2 ຕິດຕາມ ການຄຸ້ມຄອງການນຳໃຊ້ ແລະ ການສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານ ຂອງບັນດາ ຂະແໜງ, ກອງ ແລະ ໜ່ວຍງານ ທີ່ນຳໃຊ້ງົບປະມານ ກອງທຶນ ກພປຊ

8.2 ຂະແໜງການເງິນ ແມ່ນຮັບຜິດຊອບວຽກງານ ການລະດົມ, ຊຸກຍູ້ວຽກງານການເກັບລາຍຮັບເຂົ້າ ກອງທຶນ ກພປຊ ໃຫ້ສອດຄ່ອງກັບບັນດາ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການເກັບລາຍຮັບ

ທີ່ໄດ້ປະກາດໃຊ້ ແລະ ສະເໜີແຫຼ່ງລາຍຮັບທີ່ສົມຄວນເກັບເຂົ້າກອງທຶນ .

8.3 ຂະແໜງອຸດສາຫະກຳ ແລະ ການຄ້າຮັບຜິດຊອບ ໄລ່ລຽງຈຳນວນ , ລາຄາຊື້ ຂາຍ ແລະ ສັນຍາການຊື້ ຂາຍໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນຂໍ້ມູນໃຫ້ຂະແໜງການເງິນເກັບລາຍຮັບ.

8.4 ຂະແໜງພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງການ ທ່ອງທ່ຽວ ຮັບຜິດຊອບການລະດົມທຶນຈາກແຫຼ່ງລາຍຮັບໃນຂະແໜງການຂອງຕົນເພື່ອແຍກເຂົ້າເປັນລາຍຮັບເຂົ້າກອງທຶນ ກພປຊ.

ມາດຕາ 9 ການຄຸ້ມຄອງລາຍຮັບຂອງ ກອງທຶນ ກພປຊ

9.1 ໃຫ້ປະຕິບັດຕາມ ຂໍ້ 6 ຂອງບົດແນະນຳ ກະຊວງການເງິນ ສະບັບເລກທີ່ 0885/ ກງ, ລົງວັນທີ່ 27 ເມສາ 2007 ວ່າດ້ວຍ ການຈັດຕັ້ງປະຕິບັດດຳລັດ ເລກທີ່ 38/ ນຍ, ລົງວັນທີ 21 ກຸມພາ 2005 ຊຶ່ງລະບຸວ່າ : ມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ ຢູ່ບັນດາແຂວງ ແລະ ນະຄອນຫຼວງເປັນຜູ້ຕິດຕາມເກັບລາຍຮັບຂອງກອງທຶນ ກພປຊ ແລ້ວໂອນເຂົ້າບັນຊີລາຍຮັບຂອງ ກອງທຶນ ກພປຊ ທີ່ໄດ້ເປີດໄວ້ຢູ່ຄັງເງິນສູນກາງ ໃຫ້ທັນຕາມກຳນົດເວລາ ແລະ ບໍ່ອະນຸຍາດໃຫ້ຂະແໜງການ ແລະ ທ້ອງຖິ່ນໃດເອົາເງິນລາຍຮັບຂອງກອງທຶນ ກພປຊ ໄປນຳໃຊ້ກ່ອນ .

9.2 ຂັ້ນຕອນການເກັບລາຍຮັບ ແລະ ການໂອນງົບປະມານເຂົ້າບັນຊີ ກອງທຶນ ກພປຊ ສູນກາງ ແມ່ນໃຫ້ປະຕິບັດຕາມລະບຽບການ ການເງິນ .

ມາດຕາ 10 ການນຳໃຊ້ງົບປະມານຂອງກອງທຶນ ກພປຊ

ການນຳໃຊ້ງົບປະມານຂອງກອງທຶນ ກພປຊ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຂອງບັນດາຂະແໜງການ, ກອງ ແລະ ໜ່ວຍງານ ຕ້ອງໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງດຳລັດ ສະບັບເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005

ມາດຕາ 11 ພາຍຫຼັງທີ່ ກອງທຶນ ກພປຊ ໄດ້ໂອນເງິນເຂົ້າບັນຊີ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ນະຄອນຫຼວງ ແລ້ວ ທຸກໆການໃຊ້ຈ່າຍ ຕ້ອງໄດ້ເປັນເອກະພາບກັນພາຍໃນພະແນກເພື່ອໃຫ້ການນຳໃຊ້ໄປຕາມເປົ້າໝາຍ ແລະ ຖືກຕ້ອງຕາມລະບຽບການ ຂອງກອງທຶນ ແລະ ກະຊວງການເງິນວາງອອກ.

## ໝວດ V.

## ການຕິດຕາມ ກວດກາ, ປະເມີນຜົນ ແລະ ລະບົບລາຍງານ

ມາດຕາ 12 ການຕິດຕາມ ກວດກາ, ປະເມີນຜົນ ແລະ ລະບົບລາຍງານ

ສ້າງແຜນເດືອນໄຕວຽກງານຕິດຕາມກວດກາ ແລະ ປະເມີນ ສະພາບການຄຸ້ມຄອງນຳໃຊ້ງົບປະມານເຂົ້າໃນກິດຈະກຳຕ່າງໆ , ການເກັບລາຍຮັບເຂົ້າກອງທຶນ , ຍົກໃຫ້ເຫັນແຕ່ລະດ້ານ ຜົນໄດ້ຮັບ, ດ້ານດີ , ຂໍ້ຄົງຄ້າງ ເພື່ອນຳສະເໜີໃຫ້ຂັ້ນເທິງມີທິດທາງແກ້ໄຂ ແລະ ປັບປຸງລະບົບ

ກັນໄກ ການຄຸ້ມຄອງນຳໃຊ້ງົບປະມານ ກອງທຶນ ແລະ ການເກັບລາຍຮັບເຂົ້າກອງທຶນ ກພປຊ ໃນຂັ້ນຕໍ່ໄປໃຫ້ມີປະສິດທິຜົນ .

ມາດຕາ 13 ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ເປັນເຈົ້າການໃນການຕີລາຄາຜົນ ການນຳໃຊ້ງົບປະມານ ຂອງຂະແໜງການ, ກອງ ແລະ ໜ່ວຍງານໃຫ້ຖືກຕາມແຜນປະຈຳງວດ , ສົກປີ ແລະ ຕີລາຄາສະພາບການເກັບລາຍຮັບເຂົ້າກອງທຶນ ກພປຊ . ພາຍຫຼັງ ທີ່ກອງທຶນ ກພປຊ ໄດ້ໂອນເງິນໃຫ້ໄປຈັດຕັ້ງປະຕິບັດແລ້ວໃຫ້ຕິດຕາມ ການນຳໃຊ້ ແລະ ການສະຫຼຸບລາຍງານ ຂອງຂະແໜງການ, ກອງ ແລະ ໜ່ວຍງານ ເພື່ອ ສົ່ງໃຫ້ສະພາ ບໍລິຫານ ກອງທຶນ ກພປຊ ໂດຍຜ່ານຫ້ອງການ ກອງເລຂາ ກອງທຶນ ກພປຊ ຮັບ ຊາບນຳເປັນແຕ່ລະໄລຍະ ຄື : ປະຈຳ ເດືອນ, ງວດ , 6 ເດືອນ ແລະ ປະຈຳສົກປີ .

## ໝວດທີ VI

## ການສ້າງແຜນການເຄື່ອນໄຫວ ຂອງຄະນະກຳມະການ ກອງທຶນ ກພປຊ ຂັ້ນທ້ອງຖິ່ນ

ມາດຕາ 14 ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ ຕ້ອງເປັນເຈົ້າການ ໃນການສ້າງແຜນເຄື່ອນໄຫວວຽກງານເພື່ອຕິດຕາມ ແລະ ແນະນຳບັນດາຂະແໜງ , ກອງ ແລະ ໜ່ວຍງານຕ່າງໆໃນການສ້າງບົດສະເໜີໂຄງການ ແລະ ສ້າງແຜນ ລະອຽດ, ຕິດຕາມການນຳໃຊ້ ງົບປະມານ ແລະ ການສະຫຼຸບລາຍງານ , ສ້າງແຜນຊຸກຍູ້ເກັບລາຍຮັບເຂົ້າກອງທຶນ ກພປຊ ປະຈຳເດືອນ, ງວດ ແລະ ສົກປີໃຫ້ລະອຽດ ເພື່ອເຮັດໃຫ້ການດຳເນີນວຽກງານໄປຕາມເປົ້າໝາຍ ແລະ ລະບຽບການຢ່າງມີປະສິດທິຜົນສູງ .

## ໝວດ ທີ VII

## ວ່າດ້ວຍ ຂໍ້ບັນຍັດສຸດທ້າຍ

ມາດຕາ 15 ມອບໃຫ້ຄະນະກຳມະການ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂັ້ນທ້ອງຖິ່ນ ດຳເນີນໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

ມາດຕາ 16. ຫ້ອງວ່າການປົກຄອງແຂວງ ແລະ ນະຄອນຫຼວງ, ອຳນາດການປົກຄອງທ້ອງຖິ່ນ, ພະແນກການ, ກອງ, ໂຮງຮຽນສູນຝຶກ ກະສິກຳ ແລະ ປ່າໄມ້ ແລະ ຂະແໜງການຕ່າງໆ ທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ .

ມາດຕາ 17. ຂໍ້ຕົກລົງ ສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ປະທານສະພາ ບໍລິຫານ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ສະພາບໍລິຫານ

ດຣ. ຕີ ພົມມະສັກ